ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕ້ອນຮັບຄະນະຈາກກຸ່ມທະນາຄານໂລກ



ໃນຕອນບ່າຍຂອງວັນທີ 13 ສິງຫາ 2025, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ນາງ ບຸນຄຳ ວໍລະຈິດ, ຜູ້ວ່າການ ທຫລ ພ້ອມດ້ວຍຄະນະກົມກ່ຽວຂ້ອງ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຄຣິມາ ເອັນທາຣາ (Khwima Nthara), ຫົວໜ້າຫ້ອງການ ກຸ່ມທະນາຄານໂລກ (World Bank Group ຫຼື WBG) ປະຈຳ ສປປ ລາວ ພ້ອມດ້ວຍຄະນະ. ຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ ແມ່ນເພື່ອແນະນຳຕົວໃນວາລະທີ່ມາຮັບຕຳແໜ່ງໃໝ່ຢູ່ຫ້ອງການ WBG ປະຈຳ ສປປ ລາວ ແລະ ຖືໂອກາດດັ່ງກ່າວສະແດງຄວາມຂອບໃຈໃນການສະໜັບສະໜູນຊຶ່ງກັນ ແລະ ກັນໃນໄລຍະຜ່ານມາ. ໃນໂອກາດນີ້, ທ່ານ ຜູ້ວ່າການ ທຫລ ໄດ້ສະແດງຄວາມຂອບໃຈຕໍ່ WBG ສຳລັບການພົວພັນຮ່ວມມືທີ່ດີແກ່ ທຫລ ໃນແຕ່ລະໄລຍະຜ່ານມາ ແລະ ຫວັງຢ່າງຍິ່ງວ່າ WBG ຈະສືບຕໍ່ໃນການສະໜັບສະໜູນຊ່ວຍເຫຼືອທີ່ດີໃຫ້ແກ່ ທຫລ ໂດຍສະເພາະວຽກງານການຊ່ວຍເຫຼືອທາງດ້ານວິຊາການໃນອະນາຄົດຕື່ມອີກ.




ຂ່າວ: ກົມຮ່ວມມືສາກົນ

ພາບ: ຫ້ອງການ ທະນາຄານແຫ່ງ ສປປ ລາວ